# Mekong River Commission

P.O. Box 6101, Vientiane 01000, Lao PDR
Telephone: (856-21) 263 263 Facsimile: (856-21) 263 264
Email: mrcs@mrcmekong.org Website: www.mrcmekong.org


<u>*ບົດຖະແຫລງຂ່າວ*</u>

MRC No.14/08

## *ສະພາບການນ້ຳຖ້ວມ ແລະ*
## *ແນວຄວາມຄິດໃໝ່ໃນວາລະຂອງຄະນະກຳມາທິການແມ່ນ້ຳຂອງ*

**ນະຄອນຫລວງວຽງຈັນ, ສ ປ ປ ລາວ**
**28 ສິງຫາ 2008**

ສະພາບການນ້ຳຖ້ວມທີ່ຜ່ານມາຫວ່າງບໍ່ດົນນີ້ ແລະ ການພັດທະນາໂຄງລ່າງທີ່ເພີ່ມຂຶ້ນຢ່າງໄວວາ ໃນອ່າງແມ່ນ້ຳຂອງກາຍເປັນວາລະຂອງການປຶກສາຫາລື ລະຫວ່າງບັນດາປະເທດສະມາຊິກ ຂອງຄະນະກຳມາທິການແມ່ນ້ຳຂອງທີ່ນະຄອນຫລວງວຽງຈັນໃນມື້ນີ້. ບັນດາແນວຄວາມຄິດໃໝ່ເຊິ່ງ ຮວມທັງ ການປຶກສາຫາລື ກັບບັນດາຜູ້ມີສ່ວນຮ່ວມ ລະດັບພາກພື້ນ ກ່ຽວກັບແຜນງານໄຟຟ້ານ້ຳຕົກ ຂອງຄະນະກຳມາທິການແມ່ນ້ຳຂອງ ທີ່ຈະມາເຖິງ, ການພິ ຈາລະນາ ທາງດ້ານສິ່ງແວດລ້ອມ ສຳລັບການພັດທະນາໄຟຟ້ານ້ຳຕົກແບບຍືນຍົງ ແລະ ແຜນງານໃໝ່ ກ່ຽວກັບ ການຄຸ້ມຄອງໄພແຫ້ງແລ້ງ ກໍໄດ້ມີການປຶກສາຫາລືໃນກອງປະຊຸມຄະນະກຳມະການຮ່ວມ ຂອງຄະນະກຳມາທິ ການແມ່ນ້ຳຂອງ ຄັ້ງທີ 27 ເຊິ່ງຈັດຂຶ້ນ ທີ່ນະຄອນຫລວງວຽງຈັນໃນມື້ນີ້.

ດຣ. ສັກສິດ ທິເດດ, ຫົວຫນ້າຫ້ອງການກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂອງປະເທດໄທ ແລະ ທັງເປັນປະທານຄະນະກຳມະການຮ່ວມປະຈຳປີ 2008/2009 ກ່າວຕໍ່ຜູ້ເຂົ້າຮ່ວມປະຊຸມວ່າ ຄະນະກຳ ມາການແມ່ນ້ຳຂອງໄດ້ຕອບສະໜອງຢ່າງໄວວາ ແລະ ມີປະສິດທິພາບ ໃນການເຕືອນໄພໃຫ້ບັນດາພາກສ່ວນທີ່ກ່ຽວຂ້ອງລະດັບຊາດ ໃຫ້ຮັບຊາບຕໍ່ກັບສະຖານະການນ້ຳຖ້ວມໃນ ສ. ປ. ປ ລາວ ແລະ ປະເທດໄທ ແລະ ເຫດການດັ່ງກ່າວໄດ້ກາຍເປັນບັນຫາທີ່ປະຊາຊົນໃຫ້ຄວາມສົນໃຈ. ທ່ານໄດ້ກ່າວເພີ່ມເຕີມວ່າ ຄະນະກຳມາທິການແມ່ນ້ຳຂອງກຳລັງຄົ້ນຄວ້າຫາສາເຫດອັນແທ້ຈິງຂອງອຸທົກກະໄພດັ່ງກ່າວ.

ດຣ. ສັກສິດໄດ້ກ່າວຕ້ອນຮັບບັນດາພະນັກງານ ຈາກ ສີ່ (4) ປະເທດສະມາຊິກຂອງຄະນະກຳມາທິການແມ່ນ້ຳຂອງ, ກຳປູເຈຍ, ລາວ, ໄທ ແລະ ຫວຽດນາມ, ຮວມທັງຜູ້ຕາງຫນ້າຈາກອົງການຈັດຕັ້ງ ການເງິນສາກົນ ແລະ ອົງການອະນຸລັກສິ່ງແວດລ້ອມ ທີ່ເປັນຜູ້ສັງເກດການ ແລະ ຜູ້ຮ່ວມງານ. ກອງປະຊຸມຂອງຄະນະກຳມາທິການ ແມ່ນ້ຳຂອງສາກົນໄດ້ຈັດຂຶ້ນ ປີລະສອງຄັ້ງ ເພື່ອປຶກສາຫາລື ທົບທວນ ຜົນສຳ ເລັດ ແລະ ແຜນວຽກ ສຳລັບ 06 ເດືອນຕໍ່ຫນ້າ. ຄະນະກຳມະການຮ່ວມ ມີຫນ້າທີ່ຮັບຜິດຊອບ ຕໍ່ການຈັດຕັ້ງ ປະຕິບັດ ບັນດານະໂຍບາຍ ແລະ ຂໍ້ຕົກລົງ ຂອງ ສະພາມົນຕີຂອງຄະນະກຳມາທິການ ແມ່ນ້ຳຂອງ ແລະ ຊີ້ນຳບັນດາກິດຈະກຳ ຕ່າງໆ ຂອງກອງເລຂາຄະນະ ກຳມະການແມ່ນ້ຳຂອງ.

- **ລາຍລະອຽດເພີ່ມເຕີມ ກະລຸນາຕິດຕໍ່ພະນັກງານຮັບຜິດຊອບຕິດຕໍ່ພົວພັນ ທ່ານ ເອເດັນ**
  **ໂທ: 856 21 263 263 Ext 4703, ມືຖື: (856) 20 559 9139 ແຟກ: (85621) 263 264**
  **ອີເມວ: aiden@mrcmekong.org**